ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນສູງສຸດ

ເລກທີ...013.../ອອປສ

ນະຄອນຫຼວງວຽງຈັນ, ວັນທີ..02../..01./2018

# ບົດສະຫຼຸບ

## ການເຄື່ອນໄຫວວຽກງານຮອບດ້ານ ຂອງອົງການໄອຍະການປະຊາຊົນສູງສຸດປະຈຳເດືອນພະຈິກ ແລະ ທິດທາງແຜນການປະຈຳເດືອນ ທັນວາ2017

- ອີງຕາມ ແຜນການເຄື່ອນໄຫວປະຈຳປີ 2017 ຂອງອົງການໄອຍະການປະຊາຊົນສູງສຸດ;
- ອີງຕາມແຜນການເຄື່ອນໄຫວປະຈຳເດືອນພະຈິກປີ2017ຂອງອົງການໄອຍະການປະຊາຊົນສູງສຸດ.

ຜ່ານການຈັດຕັ້ງປະຕິບັດຕາມແຜນການວຽກງານຕົວຈິງ ປະຈຳເດືອນ ພະຈິກ(11) ຂອງອົງການໄອຍະການປະຊາຊົນສູງສຸດແລະ ກຳນົດທິດທາງແຜນການປະຈຳເດືອນທັນວາ(12) 2017ຈຶ່ງສະຫຼຸບໄດ້ດັ່ງນີ້:

### I. ການເຄື່ອນໄຫວວຽກງານໃນເດືອນ ພະຈິກ 2017

#### 1. ວຽກງານການເມືອງ-ແນວຄິດ

ໃນເດືອນໜຶ່ງຜ່ານມາ ຄະນະພັກ-ຄະນະນຳອົງການໄອຍະການປະຊາຊົນສູງສຸດ ໄດ້ເອົາໃຈໃສ່ສຶກສາອົບຮົມດ້ານການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນໃນອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນພາກກາງ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ດ້ວຍຫຼາຍວິທີ ຢ່າງເປັນປົກກະຕິ, ແລະ ໜັກແໜ້ນທາງດ້ານເນື້ອໃນ, ຊຶ່ງໄດ້ຖືເອົາວຽກງານດັ່ງກ່າວເປັນວຽກງານຕົ້ນຕໍ ໃນການຄຸ້ມຄອງຊີ້ນຳ-ນຳພາພະນັກງານໃຫ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົ່ງຮັກພັກດີ, ເຊື່ອໝັ້ນ ແລະ ເປັນເອກະພາບຕໍ່ການນຳພາຂອງພັກ, ມີຄວາມອຸ່ນອຽນທຸ່ນທ່ຽງ ເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ, ມີຈັນຍາບັນ, ມີນ້ຳໃຈຮັບໃຊ້ປະຊາຊົນດ້ວຍຄວາມສັດຊື່ບໍລິສຸດ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ, ມີແບບແຜນວິທີເຮັດວຽກດີສົມຄວນ ແລະ ໄດ້ເຂົ້າຮ່ວມເຊື່ອມຊຶມແນວທາງການເມືອງຂອງພັກເປັນປົກກະຕິ.

ໄດ້ເອົາໃຈໃສ່ຊີ້ນຳ-ນຳພາສ້າງຂະບວນອອກແຮງງານລວມ, ຂະບວນການແຂ່ງຂັນກິລາ, ສິລະປະວັນນະຄະດີ, ໄປຢ້ຽມຢາມເບິ່ງແຍງຊ່ວຍເຫຼືອເຊິ່ງກັນແລະກັນໃນເວລາຫຍຸ້ງຍາກ ເຈັບເປັນ, ເກີດລູກ ແລະ ອື່ນໆ, ໃຫ້ຄວາມອົບອຸ່ນກັນ ໃນຍາມຫຍຸ້ງຍາກ ແລະ ໄດ້ຈັດຕັ້ງການປ້ອງກັນເວນຍາມສຳນັກງານ ໃຫ້ມີຄວາມສະຫງົບປອດໄພ.

ໄດ້ຈັດຕັ້ງປະຖະກະຖາ ວັນຊາດທີ 2 ທັນວາ ຄົບຮອບ 42 ປີ, ວັນຄ້າຍວັນເກີດ ທ່ານປະທານໄກສອນ ພົມວິຫານ ຄົບຮອບ 97 ປີ (ໄດ້ຮຽນຮູ້ແບບແຜນການດຳລົງຊີວິດອັນດີງາມ, ຜົນງານອັນໃຫຍ່ຫຼວງ ແລະ 5 ນາມມະຍົດອັນຍິ່ງໃຫຍ່ຂອງທ່ານປະທານໄກສອນ) ໃຫ້ແກ່ສະມາຊິກພັກ, ພະນັກງານ - ລັດຖະກອນທີ່ຂຶ້ນກັບອົງການໄອຍະການປະຊາຊົນສູງສຸດ ເພື່ອໃຫ້ພະນັກງານ ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີນ້ຳໃຈຮັກຊາດ, ມີສະຕິຊາດ, ມີອຸດົມການສັງຄົມນິຍົມຢ່າງໜັກແໜ້ນ ແລະ ມີນ້ຳໃຈຮັບໃຊ້ປະຊາຊົນຢ່າງບໍລິສຸດໃຈ.

**2.ວຽກງານກິງຈັກການຈັດຕັ້ງ ແລະ ການພັດທະນາບຸກຄະລາກອນ**

➢ ວຽກງານກົງຈັກການຈັດຕັ້ງ

- ພິຈາລະນາຂຶ້ນ - ຂັ້ນເງິນເດືອນປົກກະຕິໃຫ້ພະນັກງານອົງການໄອຍະການປະຊາຊົນປະຈຳງວດ I ປີ 2018 ທັງໝົດ 13 ຄັ້ງ, ຈຳນວນ 108 ທ່ານ, ຍິງ 37 ທ່ານ;
- ກະກຽມສ້າງຕັ້ງອົງການໄອຍະການປະຊາຊົນເຂດ 3 ແຂວງ ຫົວພັນ;
- ກະກຽມລົງເຄື່ອນໄຫວຕິດຕາມໂຄງການລົງທຶນຂອງລັດເລີ່ມຕົ້ນແຕ່ຫົວທີໂຄງການກໍ່ສ້າງສຳນັກງານອົງການໄອຍະການປະຊາຊົນເຂດ 3 ເມືອງ ຊຽງເງິນ ແຂວງ ຫຼວງພະບາງ.

➢ ການພັດທະນາບຸກຄະລາກອນ

- ສຳເລັດບັ້ນຝຶກອົບຮົມທິດສະດີໄລຍະສັ້ນ 45 ວັນຊຸດທີ XIII ຈຳນວນ 66 ສະຫາຍ ແລະ ໃບຢັ້ງຢືນຮຽນພາສາອັງກິດຂອງໂຄງການ ILSTA ຈຳນວນ 19 ຄົນ, ຍິງ 9 ຄົນ;
- ກະກຽມການເລື່ອນຂັ້ນພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍໃນຂອບເຂດທົ່ວປະເທດປີ 2017
- ໄດ້ສົ່ງພະນັກງານໄປຝຶກອົບຮົມຢູ່ປະເທດຍີ່ປຸ່ນ ໃນຄັ້ງວັນທີ 10 – 23 ທັນວາ 2017.

**3. ວຽກງານການແກ້ໄຂຄະດີ ແລະ ຄຳຮ້ອງ**

**3.1** ວຽກງານຕິດຕາມກວດກາທົ່ວໄປ

➢ ການແກ້ໄຂຄຳຮ້ອງກ່ຽວກັບການປະຕິບັດກົດໝາຍ:

-ຄຳຮ້ອງຄ້າງມາແຕ່ເດືອນກ່ອນມີ 01 ເລື່ອງ, ລວມທັງໝົດ 01 ເລື່ອງ, ຍັງຄົ້ນຄວ້າ 01ເລື່ອງ.

➢ ການແກ້ໄຂຄຳຮ້ອງກ່ຽວກັບການປະຕິບັດຄຳຕັດສິນຂອງສານ:

-ຄຳຮ້ອງຄ້າງມາແຕ່ເດືອນກ່ອນມີ 01 ເລື່ອງ, ຮັບຄຳຮ້ອງເຂົ້າໃໝ່ 02 ເລື່ອງ, ລວມທັງໝົດ 03 ເລື່ອງ ຄົ້ນຄວ້າແກ້ໄຂແລ້ວ 02 ເລື່ອງ,ກຳລັງຄົ້ນຄວ້າແກ້ໄຂ 01 ເລື່ອງ.

**3.2** ວຽກງານຕິດຕາມກວດກາຄະດີອາຍາ

➢ ການແກ້ໄຂຄະດີ

- ສຳນວນຄະດີຄ້າງມາແຕ່ເດືອນ 10/2017:12 ເລື່ອງ, ຮັບເຂົ້າໃໝ່ເດືອນ 11/2017:11 ເລື່ອງ, ລວມທັງໝົດ 23 ເລື່ອງ,ໄດ້ຄົ້ນຄວ້າແກ້ໄຂສົ່ງອອກ 05 ເລື່ອງ,ຄ້າງ 18 ເລື່ອງ.

➢ ການແກ້ໄຂຄຳຮ້ອງ, ລັດຖະການ ແລະ ແຈ້ງການ

- ຄຳຮ້ອງຄ້າງມາແຕ່ເດືອນ 10/2017: 13 ເລື່ອງ, ຮັບເຂົ້າໃໝ່ເດືອນ 11/2017: 30 ເລື່ອງ, ລວມທັງໝົດ 43 ເລື່ອງ, ໄດ້ຄົ້ນຄວ້າແກ້ໄຂສົ່ງອອກແລ້ວ 28 ເລື່ອງ,ຄ້າງ 15 ເລື່ອງ.

**3.3** ວຽກງານຕິດຕາມກວດກາຄະດີແພ່ງ

- ຄະດີຄ້າງມາແຕ່ເດືອນ 10/2017: 11 ເລື່ອງ, ຮັບເຂົ້າໃໝ່ເດືອນ 11 /2017: 29 ເລື່ອງ, ລວມທັງໝົດ 40ເລື່ອງ, ໄດ້ຄົ້ນຄວ້າແກ້ໄຂສົ່ງອອກແລ້ວ 19 ເລື່ອງ, ຄ້າງ 21 ເລື່ອງ.

➢ສຳນວນຄະດີທີ່ໄດ້ທວງມາ ( ທວງຕາມຂໍ້ຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ ແລະ ຕາມຄຳຮ້ອງຂໍຮື້ຟື້ນ )

- ຄະດີຄ້າງມາແຕ່ເດືອນ 10/2017: 25 ເລື່ອງ, ຮັບເຂົ້າໃໝ່ໃນເດືອນ 11/2017: 18 ເລື່ອງ, ລວມທັງໝົດ 43ເລື່ອງ, ໄດ້ຄົ້ນຄວ້າແກ້ໄຂສົ່ງອອກ 04 ເລື່ອງ, ຄ້າງ 39 ເລື່ອງ.

➢ຄຳຮ້ອງຂໍຮື້ຟື້ນ ແລະ ຄຳຮ້ອງຂໍຄວາມເປັນທຳ

- ຄຳຮ້ອງຄ້າງມາແຕ່ເດືອນ 10/2017: 83 ເລື່ອງ, ຮັບເຂົ້າໃໝ່ເດືອນ 11/2017: 09 ເລື່ອງ, ລວມທັງໝົດ 92 ເລື່ອງ, ໄດ້ຄົ້ນຄວ້າແກ້ໄຂສົ່ງອອກແລ້ວ06ເລື່ອງ, ຄ້າງ 86 ເລື່ອງ.

➢ ຂໍ້ຕົກລົງສະພາແຫ່ງຊາດ( ທີ່ຍັງບໍ່ທັນໄດ້ທວງສຳນວນຄະດີ)

-ຄະດີຄ້າງມາແຕ່ເດືອນ 10/2017: 01 ເລື່ອງ, ຮັບເຂົ້າໃໝ່ເດືອນ 11/2017: 01 ເລື່ອງ, ລວມທັງໝົດ 02 ເລື່ອງ, ໄດ້ຄົ້ນຄວ້າແກ້ໄຂ 00 ເລື່ອງ, ຄ້າງ 02 ເລື່ອງ.

3.4 ວຽກງານຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ

➢ວຽກງານຕິດຕາມກວດກາຄ້າຍດັດສ້າງ ແລະ ອະໄພຍະໂທດ

- ໄດ້ເອົາໃຈໃສ່ຕິດຕາມເກັບກຳສະຖິຕິນັກໂທດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນມີດັ່ງນີ້:

+ **ນັກໂທດທັງໝົດໃນທົ່ວປະເທດມີຈຳນວນ 11,481 ຄົນ, ຍິງ 1,749 ຄົນ**(ໃນນີ້ມີນັກໂທດເປັນຄົນຕ່າງປະເທດຈຳນວນ 309 ຄົນ, ຍິງ33ຄົນ;ນັກໂທດປະຫານຊີວິດ 342 ຄົນ, ຍິງ 42 ຄົນ; ນັກໂທດຕະຫຼອດຊີວິດ 564 ຄົນ, ຍິງ 66 ຄົນ); ນັກໂທດອອກປິ່ນປົວ 163 ຄົນ, ຍິງ 63 ຄົນ ; ນັກໂທດຖືກໂຍກຍ້າຍ 10 ຄົນ, ຍິງ 00 ຄົນ; ນັກໂທດເສຍຊີວິດ 04 ຄົນ, ຍິງ 00 ຄົນ; ນັກໂທດຖືກປ່ອຍຕົວ 317 ຄົນ, ຍິງ 42 ຄົນໃນຈຳນວນດັ່ງກ່າວໄດ້ແຍກໃຫ້ເຫັນນັກໂທດຢູ່ຂັ້ນສູນກາງ ແລະຂັ້ນທ້ອງຖິ່ນ ຄື:

+ **ນັກໂທດຢູ່ຄ້າຍຄຸມຂັງ:ຂັ້ນສູນກາງຄຸ້ມຄອງ ມີຈຳນວນ 1,807 ຄົນ, ຍິງ 257 ຄົນ**,ໃນນີ້ມີຄົນຕ່າງປະເທດ 151 ຄົນ, ຍິງ 14 ຄົນ; ນັກໂທດປະຫານຊີວິດ 154 ຄົນ,ຍິງ 26 ຄົນ;ນັກໂທດຕະຫຼອດຊີວິດ 143 ຄົນ, ຍິງ 26 ຄົນ;

+ **ນັກໂທດຢູ່ຄ້າຍຄຸມຂັງ: ຂັ້ນທ້ອງຖິ່ນຄຸ້ມຄອງ ມີຈຳນວນ 9,674 ຄົນ, ຍິງ 1,492 ຄົນ**,ໃນນີ້ມີຄົນຕ່າງປະເທດ 158 ຄົນ, ຍິງ 19 ຄົນ; ນັກໂທດປະຫານຊີວິດ 188 ຄົນ, ຍິງ 16 ຄົນ; ນັກໂທດຕະຫຼອດຊີວິດ 421 ຄົນ, ຍິງ 40 ຄົນ.

➢ວຽກງານຕິດຕາມກວດກາສູນດັດສ້າງ

– ຜູ້ຖືກຫາຢູ່ຂັ້ນສູນກາງ ແລະທ້ອງຖິ່ນມີທັງໝົດຈຳນວນ 12,227 ຄົນ, ຍິງ 1.090 ຄົນ, ໃນນີ້ມີຄົນຕ່າງປະເທດ 422 ຄົນ, ຍິງ 63 ຄົນ; ກັກຂັງເກີນກຳນົດ 01 ປີ ມີ 244 ຄົນ, ຍິງ 26 ຄົນ; ອອກປິ່ນປົວ 32 ຄົນ, ຍິງ 22 ຄົນ; ເສຍຊີວິດ 09 ຄົນ, ຍິງ 01 ຄົນ; ຜູ້ຖືກຫາໂຕນໜີ 03 ຄົນ, ຍິງ 00 ຄົນ; ຜູ້ຖືກຫາໂຍກຍ້າຍ 22 ຄົນ, ຍິງ 01 ຄົນ; ຜູ້ຖືກຫາປ່ອຍຕົວ 679 ຄົນ, ຍິງ 68 ຄົນ; ຜູ້ຖືກຫາສັ່ງຟ້ອງຂຶ້ນສານ 563 ຄົນ, ຍິງ 52 ຄົນ.

– ຈຳນວນຜູ້ຖືກດັດສ້າງທັງໝົດມີ 5.501 ຄົນ, ຍິງ 148 ຄົນ, ໃນນີ້ຜູ້ຖືກດັດສ້າງອອກປິ່ນປົວ 15 ຄົນ, ຍິງ 00 ຄົນ; ຜູ້ຖືກດັດສ້າງເສຍຊີວິດ 03 ຄົນ, ຍິງ 00 ຄົນ; ຜູ້ຖືກດັດສ້າງໂຕນໜີ 00 ຄົນ, ຍິງ 00 ຄົນ; ຜູ້ຖືກດັດສ້າງປ່ອຍຕົວ 456 ຄົນ, ຍິງ 33 ຄົນ.

4. ວຽກງານຫ້ອງການ

- ກະກຽມເນື້ອໃນກອງປະຊຸມວຽກງານໄອຍະການປະຊາຊົນທົ່ວປະເທດ;
- ກະກຽມເພື່ອເຮັດປຶ້ມບົດລາຍງານກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VIII;
- ກະກຽມຕາຕະລາງສະຖິຕິສະຫຼຸບການແກ້ໄຂຄະດີປະຈຳປີ 2017 ຂອງອົງການໄອຍະການປະຊາຊົນພາກ,ແຂວງ ແລະບັນດາເຂດໃນຂອບເຂດທົ່ວປະເທດເພື່ອສະຫຼຸບລາຍງານແລະປະກອບໃສ່ບົດສະຫຼຸບວຽກງານໄອຍະການທົ່ວປະເທດປະຈຳປີ 2017 ຂອງອົງການໄອຍະການປະຊາຊົນ;
- ກະກຽມເນື້ອໃນເອກະສານຕ່າງໆເພື່ອຂຽນປຶ້ມຄູ່ມືກ່ຽວກັບການບໍລິຫານຄະດີຄົບວົງຈອນ;
- ເບີກຈ່າຍນ້ຳມັນບໍລິຫານນະໂຍບາຍໄປວຽກທາງລັດຖະການໃຫ້ແກ່ພະນັກງານຫ້ອງການແລະບັນດາກົມປະຈຳເດືອນ 11/2017 ຈຳນວນ 7.270.000 ກີບ ( ເຈັດລ້ານສອງແສນເຈັດສິບພັນກີບ );
- ສ້ອມແປງພາຫະນະຈຳນວນ 08 ເທື່ອຄັ້ງ, ມູນຄ່າການສ້ອມແປງ ແລະ ປ່ຽນນ້ຳມັນເຄື່ອງ ລວມມູນຄ່າທັງໝົດ 35,170,000 ກີບ ( ສາມສິບຫ້າລ້ານໜຶ່ງແສນເຈັດສິບພັນກີບນຳໃຊ້ເງິນໂອນ ); ມາຮອດວັນທີ 30/11/2017 ເຫັນວ່າການສ້ອມແປງພາຫະນະເກີນແຜນອະນຸມັດແລ້ວໃນຈຳນວນຕົວເລກທີ່ໄດ້ອະນຸມັດໃນປີ 2017 ຈຳນວນ 150.000.000 ກີບ, ແຕ່ມາຮອດປັດຈຸບັນແມ່ນເກີນແຜນມູນຄ່າ 61.750.000 ກີບ;
- ສຳເລັດການປັບປຸງລະບົບເຊີເວີ ແລະຕິດຕັ້ງລະບົບປ້ອງການເຄືອຄ່າຍຢູ່ຫ້ອງໄອທີ.

5. ວຽກງານການເງິນ

- ພິຈາລະນາອະນຸມັດລາຍຈ່າຍງົບປະມານ ພາກ 67 ປະຈຳງວດ 04/2017 ຂອງໂຄງການກໍ່ສ້າງອົງການໄອຍະການປະຊາຊົນລວມ 04 ໂຄງການສຳເລັດ;

- ພິຈາລະນາງົບປະມານ ພາກ 67 ປະຈຳງວດ 04/2017 ຂອງໂຄງການກໍ່ສ້າງອົງການໄອຍະການປະຊາຊົນລວມ 04 ໂຄງການ;

- ພິຈາລະນາເງິນເດືອນ, ເງິນອຸດໜູນຕ່າງໆ, ເງິນບໍລິຫານ, ຂອງທ້ອງຖິ່ນສຳເລັດ 100%, ໄດ້ຕີໃບຂໍຖອນເງິນ ດັດສົມ-ສິ່ງເສີມ ແລະ ເງິນຈັດຊື້ ປະຈຳງວດ 4 / 2017 ຂອງສູນກາງສຳເລັດໂດຍພື້ນຖານ.

**6. ວຽກງານແຜນການ ແລະ ຮ່ວມມືກັບຕ່າງປະເທດ**

➢ ວຽກງານຮ່ວມມືກັບຕ່າງປະເທດ.

- ປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບເພື່ອຮ່າງສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ລາວ-ຫວຽດນາມ ແລະ ສະເໜີຫາກະຊວງການຕ່າງປະເທດຂໍການອະນຸມັດໃຫ້ອົງການໄອຍະການປະຊາຊົນສູງສຸດເປັນໃຈກາງໃນການຄົ້ນຄວ້າ ແລະ ກະກຽມໃຫ້ແກ່ການເຈລະຈາ ແລະ ລົງນາມສົນທິສັນຍາວ່າດ້ວຍການຮ່ວມມືທາງດ້ານຍຸຕິທຳໃນບັນຫາທາງອາຍາລະຫວ່າງ ສປປລາວ ແລະ ສສ ຫວຽດນາມ;

- ຕິດຕາມການຂໍຮ່ວມມືທາງດ້ານຍຸຕິທຳທາງອາຍາ ລາວ - ຫວຽດນາມ ຄະດີ ( ລົດເມລະເບີດ );

- ກະກຽມແຈ້ງການເຖິງອົງການໄອຍະການປະຊາຊົນແຂວງສະຫວັນນະເຂດ ການຮ້ອງຂໍການຮ່ວມມືທາງດ້ານຍຸຕິທຳກ່ຽວກັບບັນຫາທາງອາຍາລາວ - ຫວຽດນາມຄະດີ ( ຄ້າຂາຍເຖື່ອນ ແລະ ຂາດຄວາມຮັບຜິດຊອບກໍ່ໃຫ້ເກີດຜົນກະທົບອັນໜັກໜ່ວງ );

- ກະກຽມສົ່ງຄະນະຜູ້ແທນຂັ້ນສູງ ອອປສ ໄປມອບຫຼຽນໄຊແຮງງານ ແລະ ມອບໃບຍ້ອງຍໍໃຫ້ແກ່ໂຮງຮຽນບຳລຸງສ້າງວຽກງານໄອຍະການເນື່ອງໃນໂອກາດວັນສ້າງຕັ້ງໂຮງຮຽນບຳລຸງສ້າງວຽກງານໄອຍະການຄົບຮອບ 40 ປີ;

- ປະສານສົມທົບຄະນະຜູ້ແທນອົງການໄອຍະການປະຊາຊົນແຂວງ ກວາງນິງ ສສ ຫວຽດນາມມາຢ້ຽມຢາມອົງການໄອຍະການປະຊາຊົນແຂວງ ຫຼວງພະບາງ 14-18/12/2017.

**7. ວຽກງານກວດກາ**

ໃນໜຶ່ງເດືອນຜ່ານມາໄດ້ເຄື່ອນໄຫວວຽກງານມີດັ່ງນີ້:

- ຄຳຮ້ອງທັງໝົດລວມມີ 8 ເລື່ອງ, ເຮັດບົດລາຍງານເພື່ອຂໍຄຳເຫັນຈາກຄະນະນຳ 2ເລື່ອງ; ດຳເນີນການຄົ້ນຄວ້າ ແລະ ເກັບກຳຂໍ້ມູນ 2 ເລື່ອງ .

## II. ທິດທາງແຜນການວຽກງານຈຸດສຸມໃນເດືອນ ທັນວາ 2017

**1. ວຽກງານການເມືອງ-ແນວຄິດ**

ຄະນະພັກ-ຄະນະນຳສືບຕໍ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ, ສະມາຊິກພັກໃຫ້ມີທັດສະນະທີ່ຖືກຕ້ອງຕໍ່ແນວທາງນະໂຍບາຍຂອງພັກ-ລັດດ້ວຍຫຼາຍວິທີ, ຕົ້ນຕໍແມ່ນ ຈັດຕັ້ງການເຊື່ອມຊຶມມະຕິກອງປະຊຸມໃຫຍ່ຄັ້ງທີ່ X ຂອງພັກປະຊາຊົນປະຕິວັດລາວ ແລະ ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກ ອົງການໄອຍະການປະຊາຊົນສູງສຸດ, ຈັດຕັ້ງປາຖະກະຖາ, ເລົ່າມູນເຊື້ອວັນສຳຄັນຕ່າງໆຂອງຊາດ ແລະ ສາກົນ, ສຶກສາຮໍ່າຮຽນຄຸນສົມບັດ, ສົນທຳປະຕິວັດຂອງບັນດາຜູ້ນຳລຸ້ນກ່ອນຢ່າງເປັນປົກກະຕິ ແລະ ອື່ນໆ ເພື່ອແນໃສ່ເຮັດໃຫ້ພະນັກງານ-ລັດຖະກອນ, ສະມາຊິກພັກ ມີຄຸນທາດການເມືອງໜັກແໜ້ນມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີຈັນຍາບັນ, ມີນ້ຳໃຈຮັບໃຊ້ປະຊາຊົນດ້ວຍຄວາມສັດຊື່ບໍລິສຸດ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ, ສະກັດກັ້ນ ແລະ ຕີຖອຍປະກົດການຫຍໍ້ທໍ້ໃນຖັນແຖວສະມາຊິກພັກ ພະນັກງານ-ລັດຖະກອນໃຫ້ໄດ້ຢ່າງທັນການ ແລະ ມີປະສິດທິຜົນ.

**2. ວຽກງານກິຈະການຈັດຕັ້ງ ແລະ ການພັດທະນາບຸກຄະລາກອນ**

- ກະກຽມສະຫຼຸບສັງລວມວຽກຍ້ອງຍໍປະຈຳປີ 3 ມີ 4 ຮັບປະກັນ ແລະ ວຽກງານປະເມີນຜົນລັດຖະກອນປະຈຳປີ 2017 ຂອງອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນ 3 ພາກ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ;

- ກະກຽມປະກາດການສ້າງຕັ້ງອົງການໄອຍະການປະຊາຊົນເຂດ 4 ແຂວງ ສະຫວັນນະເຂດ ແລະ ອົງການໄອຍະການປະຊາຊົນເຂດ 3 ແຂວງ ຫົວພັນ;

- ພິຈາລະນາການເລື່ອນຂັ້ນພະນັກງານໄອຍະການປະຊາຊົນຂັ້ນ1, ຂັ້ນ2, ຂັ້ນ3 ແລະ ແຕ່ງຕັ້ງຜູ້ຊ່ວຍພະນັກງານໄອຍະການປະຊາຊົນ;

- ກະກຽມ ການຂຶ້ນແຜນກຳນົດພະນັກງານ-ນຳພາຄຸ້ມຄອງຢູ່ອົງການໄອຍະການປະຊາຊົນສູງສຸດ, ພາກກາງ ແລະ ແຂວງ ວຽງຈັນ;

- ກະກຽມຂໍ້ມູນການສະເໜີແຕ່ງຕັ້ງ, ຍົກຍ້າຍ ແລະ ສັບປ່ຽນບ່ອນປະຈຳການ ແລະ ສະເໜີເລື່ອນຂັ້ນພະນັກງານໄອຍະການເຂົ້າຜ່ານຄະນະກົມ ແລະ ຄະນະພັກ;

- ພິຈາລະນາການຮັບຮອງເອົາແຜນກຳນົດພະນັກງານ-ນຳພາຄຸ້ມຄອງໃນຂອບເຂດທົ່ວປະເທດ.

**3. ວຽກງານການແກ້ໄຂຄະດີ ແລະ ຄຳຮ້ອງ**

**3.1 ວຽກງານຕິດຕາມກວດກາທົ່ວໄປ**

➢ວຽກງານວິຊາສະເພາະ:

- ເກັບກຳສະຖິຕິການປະຕິບັດຄຳຕັດສິນຂອງສານນຳບັນດາອົງການໄອຍະການປະຊາຊົນທ້ອງຖິ່ນ.

**3.2 ວຽກງານຕິດຕາມກວດກາຄະດີອາຍາ**

- ປະສານສົມທົບພາລະບົດບາດການຕິດຕາມກວດກາຂອງອົງການໄອຍະການປະຊາຊົນຂັ້ນລົບລ້າງ, ຮ່າງຄຳຖະແຫຼງຂັ້ນລົບລ້າງ, ຮ່າງຄຳສະເໜີຄັດຄ້ານຂັ້ນລົບລ້າງຂອງອົງການໄອຍະການປະຊາຊົນຕາມກົດໝາຍ.

**3.3 ວຽກງານຕິດຕາມກວດກາການດຳເນີນຄະດີແພ່ງ**

- ກະກຽມຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ພະນັກງານໄອຍະການປະຊາຊົນໃນການດຳເນີນຄະດີແພ່ງໃຫ້ບັນດາແຂວງພາກເໜືອຢູ່ແຂວງ ອຸດົມໄຊ;

- ກະກຽມຝຶກອົບຮົມວຽກງານຄະດີແພ່ງຢູ່ແຂວງ ພາກເໜືອ;

- ກະກຽມເກັບກຳສະຖິຕິທີ່ ອອປສ ໄດ້ຖະແຫຼງ ເປັນຂັ້ນລົບລ້າງ ແລະ ສະເໜີຮື້ຟື້ນໄປຍັງສານປະຊາຊົນສູງສຸດເພື່ອຮູ້ໄດ້ວ່າສານປະຊາຊົນສູງສຸດໄດ້ພິພາກສາເອົາຕາມ ອອປສ ຫຼື ບໍ່ເອົາຕາມໃນແຕ່ລະເດືອນ.

**3.4 ວຽກງານຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ**

- ປະສານສົມທົບ ກັບກົມຕຳຫຼວດຄຸມຂັງ-ດັດສ້າງເກັບກຳສະຖິຕິນັກໂທດ, ຜູ້ຖືກຫາ ແລະ ຜູ້ຖືກດັດສ້າງຄ້າຍຄຸມຂັງສູນກາງຄຸ້ມຄອງ ແລະ ວຽກງານອື່ນທີ່ກ່ຽວຂ້ອງ;

- ປະສານສົມທົບກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫ້ອງວ່າການສຳນັກງານປະທານປະເທດກ່ຽວກັບວຽກງານອະໄພຍະໂທດປະຈຳປີ 2017, ເປັນປົກກະຕິຈັດສົ່ງລັດຖະດຳລັດ, ຄຳແນະນຳ, ແຈ້ງການບັນຊີປ່ອຍ, ຜ່ອນໂທດອະໄພຍະໂທດປີ 2017, ສົ່ງໃຫ້ຄະນະກຳມະການອະໄພຍະໂທດ ຂັ້ນກະຊວງ, ແຂວງ-ນະຄອນຫຼວງວຽງຈັນ, ຈັດຕັ້ງພິທີການໃຫ້ອະໄພຍະໂທດ.

**4. ວຽກງານຫ້ອງການ**

- ສືບຕໍ່ກະກຽມເນື້ອໃນກອງປະຊຸມວຽກງານໄອຍະການທົ່ວປະເທດປະຈຳປີ 2017 ;

- ສືບຕໍ່ເກັບກຳຕົວເລກສະຖິຕິການແກ້ໄຂຄະດີຂອງບັນດາກົມພາຍໃນອອປສ, ບັນດາອຍກພາກແລະແຂວງເພື່ອປະກອບເຂົ້າໃນບົດສະຫຼຸບປະຈຳປີ 2017 ຂອງອົງການໄອຍະການປະຊາຊົນ ;

- ສືບຕໍ່ກະກຽມເນື້ອໃນເພື່ອຂຽນປຶ້ມຄູ່ມືກ່ຽວກັບການຕິດຕາມການບໍລິຫານຄະດີຄົບວົງຈອນ ;

- ສືບຕໍ່ຕິດຕາມກວດກາການແກ້ໄຂຄະດີຄົບວົງຈອນ, ວຽກງານຂາເຂົ້າ-ຂາອອກແລະການຈັດສົ່ງເອກະສານໃຫ້ເປັນປົກກະຕິ ;

- ກະກຽມເນື້ອໃນຮ່າງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ) ເພື່ອຮຽບຮຽງຄືນໃໝ່ຕາມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດຮ່ວມກັບກຳມາທິການກົດໝາຍແລະກຳມາທິການຍຸຕິທຳສະພາແຫ່ງຊາດ ;

- ຂຶ້ນແຜນນຳໃຊ້ນ້ຳມັນເຊື້ອໄຟແລະບັດໂທລະສັບປະຈຳງວດ I /2018 (ເດືອນ 01, 02 ແລະ 03) ;

- ສະຫຼຸບສັງລວມບັນດາໜີ້ສິນຕ່າງໆປະຈຳປີ 2017 ສົ່ງໃຫ້ກົມການເງິນ ;

- ສືບຕໍ່ຕິດຕາມການນຳໃຊ້ຖານຂໍ້ມູນຂອງສອງກົມວິຊາການ (ກົມກວດກາຄະດີແພ່ງແລະກົມກວດກາຄະດີອາຍາ)ເນື່ອງຈາກວ່າໄດ້ມີການປັບປຸງແກ້ໄຂໃຫ້ສຳເລັດແລ້ວແຕ່ພາກສ່ວນດັ່ງກ່າວແມ່ນບໍ່ຕີຂໍ້ມູນໃນຖານຂໍ້ມູນດັ່ງກ່າວແລະເຮັດໃຫ້ພວກເຮົາບໍ່ສາມາດຕິດຕາມໄດ້ກ່ຽວກັບຂັ້ນຕອນຕ່າງໆ ;

- ສືບຕໍ່ກະກຽມການອອກແບບແລະເຕັກນິກການສ້າງວາລະສານສະບັບທີ 5.

**5. <u>ວຽກງານການເງິນ</u>**

- ກະກຽມເອກະສານ, ຂໍ້ມູນກ່ຽວກັບລາຍຈ່າຍງົບປະມານປະຈຳປີ 2017 ເພື່ອເປັນຂໍ້ມູນໃນການສະຫຼຸບສັງລວມລາຍຈ່າຍງົບປະມານປະຈຳປີ 2017 ແລະ ປິດສະຫຼຸບ 00 ໂມງ;

- ກະກຽມຈັດແບ່ງແຜນລາຍຈ່າຍງົບປະມານປະຈຳປີ 2018 ເພື່ອນຳສະເໜີຕໍ່ຄະນະພັກ-ຄະນະນຳອົງການໄອຍະການປະຊາຊົນສູງສຸດຮັບຮອງເອົາ;

- ປະສານສົມທົບກັບຫ້ອງການເພື່ອສະຫຼຸບລາຍງານໜີ້ສິນຂອງອົງການໄອຍະການປະຊາຊົນສູງສຸດທີ່ເກີດຂຶ້ນໃນປີ 2017;

- ພິຈາລະນາການຈັດຕັ້ງປະຕິບັດລາຍຈ່າຍງົບປະມານຂອງອົງການໄອຍະການປະຊາຊົນສູງສຸດ ປະຈຳງວດ 4/2017 ໃຫ້ສຳເລັດ 100%;

- ກະກຽມເອກະສານ ແລະ ຂໍ້ມູນຕ່າງໆໃນການຈັດຕັ້ງປະຕິບັດລາຍຈ່າຍງົບປະມານປະຈຳປີ 2017 ໃຫ້ຄະນະກວດກາ 00 ໂມງ;

- ປະສານສົມທົບກັບກະຊວງການເງິນພິວພັນເອົາຕົວເລກແຜນລາຍຈ່າຍງົບປະມານປະຈຳປີ 2018;

- ກະກຽມລົງກວດກາການຈັດຕັ້ງປະຕິບັດລາຍຈ່າຍງົບປະມານປະຈຳປີ 2017 ຂອງອົງການໄອຍະການປະຊາຊົນຂັ້ນທ້ອງຖິ່ນສະຫຼຸບ 00 ໂມງ.

**6. <u>ວຽກງານແຜນການແລະ ຮ່ວມມືກັບຕ່າງປະເທດ.</u>**

- ປະສານສົມທົບແຜນການສະເໜີໃໝ່ນຳກະຊວງແຜນການ ແລະ ການລົງທຶນ ແຜນການຊຳລະການກໍ່ສ້າງຫ້ອງການອົງການໄອຍະການປະຊາຊົນທົ່ວປະເທດ ແລະ ໂຄງການສະເໜີໃໝ່ປີ 2018;

- ປະສານສົມທົບ ອຍກ ແຂວງ ຫົວພັນ ກະກຽມແຜນລົງກວດກາ 100% ແລະ ມອບ - ຮັບໂຄງການກໍ່ສ້າງຫ້ອງການອົງການໄອຍະການປະຊາຊົນເຂດ 1 ເມືອງ ຊຳເໜືອ ແຂວງ ຫົວພັນ;

- ປະສານສົມທົບຕິດຕາມບົດລາຍງານນຳກະຊວງປ້ອງກັນຄວາມສະຫງົບກ່ຽວກັບຜົນການຄົ້ນຄວ້າຮ່າງສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ລາວ-ຫວຽດນາມ ແລະ ໜັງສືສະເໜີຫາກະຊວງການຕ່າງປະເທດຂໍການອະນຸມັດໃຫ້ອົງການໄອຍະການປະຊາຊົນສູງສຸດເປັນໃຈກາງໃນການຄົ້ນຄວ້າ ແລະ ກະກຽມໃຫ້ແກ່ການເຈລະຈາ ແລະ ລົງນາມສົນທິສັນຍາວ່າດ້ວຍການຮ່ວມມືທາງດ້ານຍຸຕິທຳໃນບັນຫາທາງອາຍາລະຫວ່າງ ສປປລາວ ແລະ ສສ ຫວຽດນາມ;

- ປະສານສົມທົບກັບກະຊວງການຕ່າງປະເທດກ່ຽວກັບການຂໍຈຸດປະສານງານຂອງອົງການໄອຍະການເກົາຫຼີ ແລະ ເອກົວດໍ;

- ກະກຽມເນື້ອໃນ, ຫຼຽນໄຊ, ໃບຍ້ອງຍໍໂຮງຮຽນບຳລຸງວຽກງານໄອຍະການພາກໃຕ້ນະຄອນໂຮຈິມິນ;

- ປະສານສົມທົບໂຄງການກ່ຽວກັບການຈັດຝຶກອົບຮົມວຽກງານສ້າງຄວາມເຂັ້ມແຂງທາງດ້ານວິຊາການເພື່ອຈັດຕັ້ງປະຕິບັດກົດໝາຍພະນັກງານ-ລັດຖະກອນຂອງກົມຈັດຕັ້ງພະນັກງານ.

**7. <u>ວຽກງານກວດກາ.</u>**

- ກະກຽມຈັດຝຶກອົບຮົມວຽກງານກວດກາການສ້າງຄວາມເຂັ້ມແຂງທາງດ້ານວິຊາການ ກ່ຽວກັບວຽກງານກວດກາພັກ-ກວດກາລັດ;

- ກະກຽມຂຶ້ນແຜນລົງເຄື່ອນໄຫວວຽກງານເກັບກຳຂໍ້ມູນຄວາມເປັນໄປໄດ້ກ່ຽວກັບການສ້າງຕັ້ງຂະແໜງກວດກາຢູ່ອົງການໄອຍະການປະຊາຊົນແຂວງ ຊຽງຂວາງ, ກວດກາໂຄງການກໍ່ສ້າງອາຄານ ອົງການໄອຍະການປະຊາຊົນເຂດ 2 ເມືອງຄຳ ແຂວງ ຊຽງຂວາງ.

**III. <u>ມາດຕະການຈັດຕັ້ງປະຕິບັດ.</u>**

**1.** ຈັດຕັ້ງເຜີຍແຜ່ແຜນການໃຫ້ຄະນະນໍາ, ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະຝຶກອົບຮົມໄອຍະການ ຮັບຊາບ ແລະ ເຂົ້າໃຈຢ່າງເລິກເຊິ່ງ;

**2.** ໃຫ້ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການສ້າງເປັນແຜນວຽກລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດ, ແລ້ວສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດ ແລະ ທິດທາງແຜນການໃນເດືອນຕໍ່ໄປໃຫ້ຫ້ອງການ ອອປສ ສັງລວມລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນສູງສຸດເພື່ອຊາບ ແລະ ມີທິດຊີ້ນໍາ.

ດັ່ງນັ້ນ, ຈຶ່ງສະຫລຸບຕີລາຄາການເຄື່ອນໄຫວວຽກງານຜ່ານມາ ແລະ ວາງທິດທາງແຜນການຕໍ່ໜ້າ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ຄໍາສານ ສຸວົງ

<u>ບ່ອນສົ່ງ</u>

- ຫ້ອງວ່າການປະທານປະເທດ 01 ສະບັບ
- ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ 01 ສະບັບ
- ຄະນະນໍາ ອອປສ ທ່ານລະ 01 ສະບັບ;
- ທ່ານຜູ້ຊ່ວຍຫົວໜ້າ ອອປສ 01 ສະບັບ;
- ບັນດາທ່ານຫົວໜ້າກົມ, ຫົວໜ້າຫ້ອງການ ທ່ານລະ 01 ສະບັບ;
- ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ 01 ສະບັບ;
- ເກັບມ້ຽນສໍານົ່າ 01 ສະບັບ.